**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ................/ລບ

ນະຄອນຫຼວງວຽງຈັນ, ວັນທີ..................2023

# (ຮ່າງ) ດຳລັດ
# ວ່າດ້ວຍ ການຄຸ້ມຄອງສິນຄ້າສອງດ້ານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ໜັງສືສະເໜີຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ................/ອຄ, ລົງວັນທີ ......2023.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານສິນຄ້າສອງດ້ານ ເພື່ອຊຸກຍູ້, ສົ່ງເສີມ ວຽກງານດັ່ງກ່າວໃຫ້ ມີຄວາມສະດວກ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເຮັດໃຫ້ ມີຄວາມປອດໄພ, ໂປ່ງໃສ, ຮັກສາສະຖຽນລະພາບ ແລະ ຄວາມໝັ້ນຄົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ.

### ມາດຕາ 2 ການຄຸ້ມຄອງສິນຄ້າສອງດ້ານ

ສິນຄ້າສອງດ້ານ ແມ່ນ ສິນຄ້າ ແລະ ເຕັກໂນໂລຊີ ທີ່ສາມາດນຳໃຊ້ໄດ້ ໃນທາງພົນລະເຮືອນ ແລະ ທາງການທະຫານ ຊຶ່ງອາດຖືກນຳໃຊ້ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ.

ການຄຸ້ມຄອງສິນຄ້າສອງດ້ານ ແມ່ນການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບການ **ແລະ** ມາດຕະການ ກ່ຽວກັບການສົ່ງອອກ, ຜ່ານແດນ ແລະ ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້າສອງດ້ານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຕັກໂນໂລຊີ** ໝາຍເຖິງ ຄວາມຮູ້ທີ່ນຳໃຊ້ສຳລັບ ການອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ສິນຄ້າສອງດ້ານ ຊຶ່ງກວມເອົາຊອບແວ ແລະ ຂໍ້ມູນທາງດ້ານເຕັກນິກ ເປັນຕົ້ນ ແບບພິມຂຽວ, ແມ່ແບບ, ແຜນວາດ, ແຜນຜັງ, ສູດ, ຕາຕະລາງ, ມາດຕະຖານ, ແບບທາງດ້ານວິສະວະກຳ, ຄູ່ມື ແລະ ຄຳແນະນຳ ທີ່ຢູ່ໃນຮູບແບບສິ່ງພິມ ຫຼື ເອເລັກໂຕຣນິກ;

2. **ອາວຸດທຳລາຍລ້າງຜານ** ໝາຍເຖິງ ອາວຸດນິວເຄຼຍ, ອາວຸດເຄມີ, ອາວຸດຊີວະພາບ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. **ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ** ໝາຍເຖິງ ອຸປະກອນ ຫຼື ລະບົບ ທີ່ຖືກອອກແບບສະເພາະ ເພື່ອນຳສົ່ງອາວຸດທຳລາຍລ້າງຜານ ເປັນຕົ້ນ ຂີປະນາວຸດ (Missile), ລູກສອນໄຟ (Rocket) ແລະ ລະບົບນຳສົ່ງອື່ນ;

4. **ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນກິດຈະການກ່ຽວກັບການສົ່ງອອກ, ຜ່ານແດນ ແລະ ບໍລິການນາຍໜ້າ (Brokering) ທີ່ຕິດພັນກັບສິນຄ້າສອງດ້ານ;

5. **ການສົ່ງອອກ** ໝາຍເຖິງ ການນຳເອົາສິນຄ້າສອງດ້ານອອກຈາກ ສປປ ລາວ ລວມທັງການສົ່ງອອກຊົ່ວຄາວ ແລະ ການສະໜອງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ທີ່ຕິດພັນກັບສິນຄ້າສອງດ້ານ;

6. **ການຜ່ານແດນ** ໝາຍເຖິງ ການນຳເອົາສິນຄ້າສອງດ້ານຈາກປະເທດໜຶ່ງ ຜ່ານ ສປປ ລາວ ໄປປະເທດທີສາມ;

7. **ການບໍລິການນາຍໜ້າທີ່ຕິດພັນກັບສິນຄ້າສອງດ້ານ** ໝາຍເຖິງ ການເຄື່ອນໄຫວຂອງບຸກຄົນ ຫຼື ນິຕິບຸກຄົນ ຢູ່ ສປປ ລາວ ເພື່ອໃຫ້ບໍລິການ ເຈລະຈາ, ຈັດຫາ ຫຼື ອຳນວຍຄວາມສະດວກ ໃຫ້ແກ່ການເຮັດທຸລະກຳການຄ້າສິນຄ້າສອງດ້ານ ຈາກ ປະເທດໜຶ່ງ ໄປຫາ ອີກປະເທດໜຶ່ງ ບໍ່ວ່າການບໍລິການດັ່ງກ່າວ ເກີດຂຶ້ນ ຢູ່ໃນ ຫຼື ຢູ່ນອກ ສປປ ລາວ;

8. **ໃບອະນຸຍາດ** ໝາຍເຖິງ ເອກະສານ ທີ່ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ເພື່ອອະນຸຍາດໃຫ້ ສົ່ງອອກ ຫຼື ຜ່ານແດນ ສິນຄ້າສອງດ້ານ ຕາມ ປະເພດ, ຈຳນວນ ແລະ ປະເທດປາຍທາງ ທີ່ກຳນົດໃນໃບອະນຸຍາດດັ່ງກ່າວ;

9. **ໃບຢັ້ງຢືນການບໍລິການນາຍໜ້າ** ໝາຍເຖິງ ເອກະສານ ທີ່ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ແກ່ ບຸກຄົນ ຫຼື ນິຕິບຸກຄົນ ເພື່ອຢັ້ງຢືນ ແລະ ຕິດຕາມການເຄື່ອນໄຫວການໃຫ້ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້າສອງດ້ານ;

10. **ໃບຢັ້ງຢືນຜູ້ນຳໃຊ້ສິນຄ້າສອງດ້ານສຸດທ້າຍ** ໝາຍເຖິງ ເອກະສານທີ່ຢັ້ງຢືນກ່ຽວກັບຂໍ້ມູນລາຍລະອຽດຂອງຜູ້ນຳໃຊ້ສິນຄ້າສອງດ້ານສຸດທ້າຍ ແລະ ຈຸດປະສົງຂອງການນຳໃຊ້, ຊຶ່ງຖືກຮັບຮອງໂດຍໜ່ວຍງານຄຸ້ມຄອງສິນຄ້າສອງດ້ານ ຫຼື ໜ່ວຍງານທີ່ມີສິດອຳນາດຂອງປະເທດປາຍທາງ ທີ່ນຳເຂົ້າສິນຄ້າສອງດ້ານດັ່ງກ່າວ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ**

ລັດ ຊຸກຍູ້, ສົ່ງເສີມ ວຽກງານການຄຸ້ມຄອງສິນຄ້າສອງດ້ານ ດ້ວຍການວາງນະໂຍບາຍ, ລະບຽບການ ແລະ ມາດຕະການ ລວມທັງການສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ ແລະ ພັດທະນາບຸກຄະລາກອນ ສຳລັບວຽກງານການຄຸ້ມຄອງສິນຄ້າສອງດ້ານ ໃຫ້ດຳເນີນໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ຊຸກຍູ້, ສົ່ງເສີມ ການນຳໃຊ້ສິນຄ້າສອງດ້ານຖືກຕາມ ຈຸດປະສົງ ແລະ ເປົ້າໝາຍ ຂອງການອະນຸຍາດ ເພື່ອປ້ອງກັນ, ຈຳກັດ ແລະ ບໍ່ສ້າງຜົນກະທົບຮ້າຍແຮງຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ**

ການຄຸ້ມຄອງສິນຄ້າສອງດ້ານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ ສັງຄົມ ແຫ່ງຊາດ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
2. ຮັບປະກັນຄວາມປອດໄພຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ສັງຄົມ;
3. ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນຄົງ;
4. ຮັບປະກັນການອຳນວຍຄວາມສະດວກທາງການຄ້າ;
5. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ບໍ່ເລືອກປະຕິບັດ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບສິນຄ້າສອງດ້ານ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ການຄຸ້ມຄອງສິນຄ້າສອງດ້ານ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການ ຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການໃຫ້ບຸກຄະລາກອນ, ປະຕິບັດສົນທິ ສັນຍາ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການສົ່ງອອກ ແລະ ຜ່ານແດນ ສິນຄ້າສອງດ້ານ

**ມາດຕາ 8 ການຂໍອະນຸຍາດ ສົ່ງອອກ ແລະ ຜ່ານແດນ ສິນຄ້າສອງດ້ານ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງສົ່ງອອກ ຫຼື ຜ່ານແດນ ສິນຄ້າສອງດ້ານ ຕ້ອງຂໍອະນຸຍາດ ນຳ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍປະກອບເອກະສານສະເໜີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງ ດຳລັດສະບັບນີ້.

ການສົ່ງອອກ ຫຼື ຜ່ານແດນ ສິນຄ້າອື່ນ ທີ່ບໍ່ນອນໃນບັນຊີສິນຄ້າສອງດ້ານ ຕ້ອງດຳເນີນຂັ້ນຕອນການ ສົ່ງອອກ ຫຼື ຜ່ານແດນ ຄືກັບສິນຄ້າສອງດ້ານ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ອົງການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ ແຈ້ງໃຫ້ຜູ້ດຳເນີນທຸລະກິດສິນຄ້າສອງ ດ້ານ ດຳເນີນຂັ້ນຕອນຂໍອະນຸຍາດ ເນື່ອງຈາກ ມີຂໍ້ມູນທີ່ເຊື່ອໄດ້ວ່າ ສິນຄ້າດັ່ງກ່າວ ອາດຈະຖືກນຳໄປໃຊ້ ໂດຍ ກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງ ຂອງອາວຸດທຳລາຍລ້າງຜານ;
2. ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ຮູ້ ຫຼື ສົງໄສ ວ່າ ສິນຄ້າດັ່ງກ່າວ ອາດຈະຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງ ອາວຸດທຳລາຍລ້າງຜານ.

**ມາດຕາ 9 ເອກະສານປະກອບການຂໍໃບອະນຸຍາດ**

ເອກະສານປະກອບການຂໍໃບອະນຸຍາດ ສົ່ງອອກ ຫຼື ຜ່ານແດນ ສິນຄ້າສອງດ້ານ ມີດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດ ຕາມແບບພິມຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ;
2. ໃບຢັ້ງຢືນຜູ້ນໍາໃຊ້ສິນຄ້າສອງດ້ານສຸດທ້າຍ;
3. ເອກະສານແຈ້ງຂໍ້ມູນລາຍລະອຽດທາງດ້ານເຕັກນິກ, ຄຸນລັກສະນະ ແລະ ການນໍາໃຊ້ສິນຄ້າສອງດ້ານ;
4. ເອກະສານຢັ້ງຢືນແຫຼ່ງທີ່ມາ ແລະ ການໄດ້ມາຂອງສິນຄ້າສອງດ້ານ ເປັນຕົ້ນ ສັນຍາຊື້ຂາຍ, ເອກະສານສັ່ງຊື້, ໃບແຈ້ງລາຄາ, ບັນຊີສິນຄ້າ ແລະ ບັນທຶກການຈັດສົ່ງ;
5. ໃບຢັ້ງຢືນມາດຕະຖານໄອຊີພີ ກໍລະນີ ຂໍໃບອະນຸຍາດແບບກອມລວມ;
6. ເອກະສານກ່ຽວຂ້ອງອື່ນ.

**ມາດຕາ 10 ການພິຈາລະນາອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ກະຊວງອຸດສະຫະກໍາ ແລະ ການຄ້າ ປະສານສົມທົບກັບຂະແໜງ ການກ່ຽວຂ້ອງ ໃນການພິຈາລະນາອອກໃບອະນຸຍາດ.

ກໍລະນີ ບໍ່ສາມາດອອກໃບອະນຸຍາດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດ. ຜູ້ຂໍອະນຸຍາດສາມາດຂໍອຸທອນການແຈ້ງປະຕິເສດດັ່ງກ່າວ ຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາຄືນ.

ຂັ້ນຕອນ, ເງື່ອນໄຂ ແລະ ກໍານົດເວລາລະອຽດ ກ່ຽວກັບ ການພິຈາລະນາອອກໃບອະນຸຍາດ ແລະ ການຂໍອຸທອນ ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ຮູບແບບຂອງໃບອະນຸຍາດ**

ໃບອະນຸຍາດ ສົ່ງອອກ ຫຼື ຜ່ານແດນ ສິນຄ້າສອງດ້ານ ມີ ສອງ ຮູບແບບ ດັ່ງນີ້:

1. ໃບອະນຸຍາດແບບສະເພາະ (Individual License) ສາມາດນໍາໃຊ້ໄດ້ຄັ້ງດຽວ ເພື່ອດໍາເນີນການສົ່ງອອກ ຫຼື ຜ່ານແດນ ໜຶ່ງ ຫຼື ຫຼາຍ ປະເພດສິນຄ້າສອງດ້ານ ໄປຫາ ໜຶ່ງຜູ້ນໍາໃຊ້ສິນຄ້າສອງດ້ານສຸດທ້າຍ;
2. ໃບອະນຸຍາດແບບກອມລວມ (Global License) ສາມາດນໍາໃຊ້ໄດ້ຫຼາຍຄັ້ງ ເພື່ອດໍາເນີນການສົ່ງອອກ ຫຼື ຜ່ານແດນ ໜຶ່ງ ຫຼື ຫຼາຍ ປະເພດສິນຄ້າສອງດ້ານ ໄປຫາ ໜຶ່ງ ຫຼື ຫຼາຍ ຜູ້ນໍາໃຊ້ສິນຄ້າສອງດ້ານສຸດທ້າຍ.

**ມາດຕາ 12 ອາຍຸການນໍາໃຊ້ຂອງໃບອະນຸຍາດ**

ໃບອະນຸຍາດແບບສະເພາະ ມີອາຍຸການນໍາໃຊ້ ໜຶ່ງປີ. ໃບອະນຸຍາດແບບກອມລວມ ມີອາຍຸການນໍາໃຊ້ ສອງປີ.

ໃບອະນຸຍາດ ສາມາດຕໍ່ອາຍຸການນໍາໃຊ້ໄດ້ ໂດຍປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງດໍາລັດສະບັບນີ້ ສະເໜີຕໍ່ ກະຊວງອຸດສາຫະກໍາ ແລະ ການຄ້າ ສາມສິບວັນ ກ່ອນວັນໝົດອາຍຸການນໍາໃຊ້.

**ມາດຕາ 13 ການຍົກເລີກໃບອະນຸຍາດ**

ໃບອະນຸຍາດ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ອົງການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ ມີຂໍ້ມູນທີ່ເຊື່ອໄດ້ວ່າສິນຄ້າດັ່ງກ່າວ ຈະຖືກນຳໄປໃຊ້ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ;

2. ຜູ້ໄດ້ຮັບອະນຸຍາດ ບໍ່ປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;

3. ລະເມີດກົດໝາຍ, ລະບຽບການ ຢ່າງຮ້າຍແຮງ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

4. ຜູ້ໄດ້ຮັບອະນຸຍາດ ບໍ່ປະຕິບັດພັນທະ ທີ່ກຳນົດໄວ້ໃນມາດຕາ 27 ຂອງດຳລັດສະບັບນີ້;

5. ຜູ້ໄດ້ຮັບອະນຸຍາດ ສະເໜີຂໍຍົກເລີກ ການສົ່ງອອກ ຫຼື ຜ່ານແດນ ສິນຄ້າສອງດ້ານ ດ້ວຍຄວາມສະໝັກໃຈ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງກ່ຽວກັບການຍົກເລີກໃບອະນຸຍາດ ໃຫ້ຜູ້ໄດ້ຮັບອະນຸຍາດ, ຂະແໜງການທີ່ກ່ຽວຂ້ອງ ແລະ ເຈົ້າໜ້າທີ່ພາສີ ພາຍໃນ ສີ່ສິບແປດ ຊົ່ວໂມງ ນັບແຕ່ເວລາອອກແຈ້ງການຍົກເລີກໃບອະນຸຍາດດັ່ງກ່າວ ເປັນຕົ້ນໄປ.

**ມາດຕາ 14 ການຂໍອຸທອນການຍົກເລີກໃບອະນຸຍາດ**

ຜູ້ຖືກຍົກເລີກໃບອະນຸຍາດ ສາມາດຍື່ນຄຳຮ້ອງຂໍອຸທອນ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນ ສາມສິບ ວັນ ນັບແຕ່ວັນອອກແຈ້ງການຍົກເລີກ ເພື່ອໃຫ້ພິຈາລະນາຄືນການຍົກເລີກໃບອະນຸຍາດດັ່ງກ່າວ ຖ້າຫາກສາມາດພິສູດໄດ້ວ່າຕົນໄດ້ປະຕິບັດຕາມ ເງື່ອນໄຂ ແລະ ກົດໝາຍ ຢ່າງຖືກຕ້ອງຄົບຖ້ວນ ຫຼື ມີຂໍ້ມູນຫຼັກຖານ ທີ່ຢັ້ງຢືນໄດ້ວ່າເຫດຜົນຂອງການຍົກເລີກໃບອະນຸຍາດນັ້ນ ບໍ່ຖືກຕ້ອງຕາມຄວາມເປັນຈິງ.

**ມາດຕາ 15 ການເກັບຮັກສາເອກະສານ ແລະ ຂໍ້ມູນ**

ຜູ້ສົ່ງອອກ ຫຼື ຜ່ານແດນ ສິນຄ້າສອງດ້ານ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງ ຄົບຊຸດ ເປັນຕົ້ນ ຂໍ້ມູນກ່ຽວກັບ ລາຍລະອຽດຂອງສິນຄ້າສອງດ້ານ, ຄູ່ສັນຍາຊື້-ຂາຍ, ທຸລະກຳການຄ້າສິນຄ້າສອງດ້ານ, ການນຳໃຊ້ສຸດທ້າຍ ແລະ ຜູ້ນຳໃຊ້ສຸດທ້າຍ ໄວ້ເປັນເວລາ ຫ້າປີ ນັບແຕ່ວັນທີ່ມີການສົ່ງອອກ ຫຼື ຜ່ານແດນ ໂດຍສາມາດເກັບຮັກສາໄວ້ໃນຮູບແບບ ເຈ້ຍ ຫຼື ເອເລັກໂຕຣນິກ.

**ມາດຕາ 16 ບັນຊີສິນຄ້າສອງດ້ານ**

ບັນຊີສິນຄ້າສອງດ້ານ ແມ່ນ ລາຍການສິນຄ້າສອງດ້ານ ທີ່ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ສ້າງ, ປັບປຸງ ແລະ ປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ 3
## ການບໍລິການນາຍໜ້າທີ່ຕິດພັນກັບສິນຄ້າສອງດ້ານ

**ມາດຕາ 17 ການຂໍໃບຢັ້ງຢືນການບໍລິການນາຍໜ້າ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງ ໃຫ້ບໍລິການນາຍໜ້າທີ່ຕິດພັນກັບສິນຄ້າສອງດ້ານ ຕ້ອງຂໍໃບຢັ້ງຢືນການບໍລິການນາຍໜ້າ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍປະກອບເອກະສານຕາມມາດຕາ 18 ຂອງດຳລັດສະບັບນີ້.

**ມາດຕາ 18 ເອກະສານປະກອບຂໍໃບຢັ້ງຢືນການບໍລິການນາຍໜ້າ**

ເອກະສານປະກອບຂໍໃບຢັ້ງຢືນການບໍລິການນາຍໜ້າມີດັ່ງນີ້:

1. ໃບສະເໜີ ຕາມແບບພິມຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
2. ສຳເນົາໃບທະບຽນວິສາຫະກິດ;
3. ເອກະສານແຈ້ງຂໍ້ມູນລາຍລະອຽດການບໍລິການນາຍໜ້າ;
4. ໃບຢັ້ງຢືນມາດຕະຖານໄອຊີພີ.

**ມາດຕາ 19 ການພິຈາລະນາອອກໃບຢັ້ງຢືນການບໍລິການນາຍໜ້າ**

ພາຍຫຼັງໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບຢັ້ງຢືນການບໍລິການນາຍໜ້າ ພາຍໃນກຳນົດເວລາ ສິບ ວັນ ນັບແຕ່ວັນໄດ້ຮັບເອກະສານ.

ກໍລະນີບໍ່ສາມາດອອກໃບຢັ້ງຢືນການບໍລິການນາຍໜ້າໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຂໍໃບຢັ້ງຢືນການບໍລິການນາຍໜ້າ. ຜູ້ຂໍໃບຢັ້ງຢືນການບໍລິການນາຍໜ້າສາມາດຂໍອຸທອນການແຈ້ງປະຕິເສດດັ່ງກ່າວ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຄືນ.

ຂັ້ນຕອນ, ເງື່ອນໄຂ ແລະ ກຳນົດເວລາລະອຽດ ກ່ຽວກັບ ການພິຈາລະນາອອກໃບຢັ້ງຢືນການບໍລິການນາຍໜ້າ ແລະ ການຂໍອຸທອນ ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ອາຍຸການນຳໃຊ້ຂອງໃບຢັ້ງຢືນການບໍລິການນາຍໜ້າ**

ໃບຢັ້ງຢືນການບໍລິການນາຍໜ້າ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້ ໂດຍປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງດຳລັດສະບັບນີ້ ສະເໜີຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ສາມສິບ ວັນ ກ່ອນວັນໝົດອາຍຸການນຳໃຊ້.

**ມາດຕາ 21 ການຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ**

ໃບຢັ້ງຢືນການບໍລິການນາຍໜ້າ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຜູ້ໃຫ້ບໍລິການນາຍໜ້າ ບໍ່ປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການຢັ້ງຢືນ;
2. ຜູ້ໃຫ້ບໍລິການນາຍໜ້າ ລະເມີດກົດໝາຍ, ລະບຽບການຢ່າງຮ້າຍແຮງ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ຜູ້ໃຫ້ບໍລິການນາຍໜ້າ ບໍ່ປະຕິບັດພັນທະ ທີ່ກຳນົດໄວ້ໃນມາດຕາ 27 ຂອງດຳລັດສະບັບນີ້;
4. ຜູ້ໃຫ້ບໍລິການນາຍໜ້າ ສະເໜີຂໍຍົກເລີກການບໍລິການນາຍໜ້າທີ່ຕິດພັນກັບສິນຄ້າສອງດ້ານດ້ວຍຄວາມສະໝັກໃຈ;
5. ຜູ້ໃຫ້ບໍລິການນາຍໜ້າ ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນການບໍລິການນາຍໜ້າ;
6. ຜູ້ໃຫ້ບໍລິການນາຍໜ້າ ໄດ້ຮັບໃບຢັ້ງຢືນການບໍລິການນາຍໜ້າຢ່າງບໍ່ຖືກຕ້ອງ ຫຼື ໄດ້ມາໂດຍຜິດກົດໝາຍ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງກ່ຽວກັບການຍົກເລີກໃບຢັ້ງຢືນການບໍລິການນາຍໜ້າໃຫ້ຜູ້ໃຫ້ບໍລິການນາຍໜ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ຊາບ ພາຍໃນ ສີ່ສິບແປດ ຊົ່ວໂມງ ນັບແຕ່ເວລາທີ່ອອກແຈ້ງການຍົກເລີກ ເປັນຕົ້ນໄປ.

**ມາດຕາ 22 ການຂໍອຸທອນການຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ**

ຜູ້ຖືກຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ ສາມາດຍື່ນຄຳຮ້ອງຂໍອຸທອນ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນ ສາມສິບ ວັນ ນັບແຕ່ວັນອອກແຈ້ງການຍົກເລີກ ເພື່ອພິຈາລະນາຄືນການຍົກເລີກດັ່ງກ່າວ ຖ້າຫາກສາມາດພິສູດໄດ້ວ່າ ຕົນໄດ້ປະຕິບັດຕາມ ເງື່ອນໄຂ ແລະ ກົດໝາຍ ຢ່າງຖືກຕ້ອງ ຫຼື ມີຂໍ້ມູນຫຼັກຖານ ທີ່ຢັ້ງຢືນໄດ້ວ່າເຫດຜົນຂອງການຍົກເລີກດັ່ງກ່າວ ບໍ່ຖືກຕ້ອງຕາມຄວາມເປັນຈິງ.

**ມາດຕາ 23 ການເກັບຮັກສາເອກະສານ ແລະ ຂໍ້ມູນ**

ຜູ້ໃຫ້ບໍລິການນາຍໜ້າ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການໃຫ້ບໍລິການນາຍໜ້າທີ່ຕິດພັນກັບສິນຄ້າສອງດ້ານ ຄົບຊຸດ ເປັນຕົ້ນ ລາຍລະອຽດຂອງສິນຄ້າສອງດ້ານ, ຄູ່ສັນຍາຊື້-ຂາຍ, ທຸລະກຳການຄ້າສິນຄ້າສອງດ້ານ, ການນຳໃຊ້ສຸດທ້າຍ ແລະ ຜູ້ນຳໃຊ້ສຸດທ້າຍ ໄວ້ເປັນເວລາ ຫ້າປີ ນັບແຕ່ວັນໄດ້ໃຫ້ບໍລິການ ໂດຍສາມາດເກັບຮັກສາໄວ້ໃນຮູບແບບ ເຈ້ຍ ຫຼື ອີເລັກໂຕຣນິກ.

## ໝວດທີ 4
## ມາດຕະຖານໄອຊີພີ

**ມາດຕາ 24 ມາດຕະຖານໄອຊີພີ**

ມາດຕະຖານໄອຊີພີ (Internal Compliance Programme - ICP) ແມ່ນຂັ້ນຕອນການຄຸ້ມຄອງບໍລິຫານພາຍໃນຂອງຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ເພື່ອຮັບປະກັນຄວາມສອດຄ່ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າສອງດ້ານ.

ມາດຕະຖານໄອຊີພີ ແລະ ຂັ້ນຕອນໃນການຢັ້ງຢືນມາດຕະຖານໄອຊີພີ ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 ໃບຢັ້ງຢືນມາດຕະຖານໄອຊີພີ**

ໃບຢັ້ງຢືນມາດຕະຖານໄອຊີພີ ແມ່ນເອກະສານທີ່ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ແກ່ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ທີ່ສາມາດປະຕິບັດມາດຕະຖານໄອຊີພີ.

ໃບຢັ້ງຢືນມາດຕະຖານໄອຊີພີ ມີອາຍຸການນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້.

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດສິນຄ້າສອງດ້ານ

**ມາດຕາ 26 ສິດຂອງຜູ້ດຳເນີນທຸລະກິດສິນຄ້າສອງດ້ານ**

ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ມີສິດ ດັ່ງນີ້:

1. ດຳເນີນການສົ່ງອອກ, ຜ່ານແດນ ສິນຄ້າສອງດ້ານ ຫຼື ໃຫ້ບໍລິການນາຍໜ້າທີ່ຕິດພັນກັບສິນຄ້າສອງດ້ານ ຕາມທີ່ໄດ້ຮັບອະນຸຍາດ ຫຼື ຢັ້ງຢືນ;
2. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີພົບເຫັນການລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບສິນຄ້າສອງດ້ານ;
3. ໄດ້ຮັບຂໍ້ມູນຂ່າວສານ ແລະ ການຝຶກອົບຮົມ ກ່ຽວກັບສິນຄ້າສອງດ້ານ;
4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 27 ພັນທະຂອງຜູ້ດຳເນີນທຸລະກິດສິນຄ້າສອງດ້ານ**

ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ມີພັນທະ ດັ່ງນີ້:

1. ແຈ້ງໃຫ້ອົງການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ ຊາບ ຫາກຮູ້ວ່າສິນຄ້າທີ່ຈະສົ່ງອອກ, ຜ່ານແດນ ຫຼື ບໍລິການນາຍໜ້າ ແມ່ນສິນຄ້າສອງດ້ານທີ່ບໍ່ຢູ່ໃນບັນຊີ;

2. ແຈ້ງໃຫ້ອົງການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ ຊາບ ຫາກສົງໄສວ່າ ສິນຄ້າທີ່ຈະສົ່ງອອກ, ຜ່ານແດນ ຫຼື ບໍລິການນາຍໜ້າ ຈະຖືກນຳໄປໃຊ້ ຫຼື ອາດຖືກນຳໄປໃຊ້ໂດຍກົງ ຫຼື ທາງອ້ອມເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບປ່າສົ່ງຂອງອາວຸດທຳລາຍລ້າງຜານ;

3. ສະໜອງເອກະສານ ແລະ ຂໍ້ມູນທີ່ຖືກຕ້ອງຕາມຄວາມເປັນຈິງໃນເວລາທີ່ສະເໜີຂໍໃບອະນຸຍາດຫຼືໃບຢັ້ງຢືນການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້າສອງດ້ານ;

4. ປະຕິບັດມາດຕະຖານໄອຊີພີ ສຳລັບຜູ້ໄດ້ຮັບໃບອະນຸຍາດແບບກວມລວມ, ໃບຢັ້ງຢືນການບໍລິການນາຍໜ້າ;

5. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການທີ່ວາງໄວ້;

6. ຮັບຜິດຊອບໂດຍກົງຕໍ່ທຸກການກະທຳຜິດ ຫຼື ການລະເມີດທີ່ເກີດຂຶ້ນ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດ, ໃບຢັ້ງຢືນການບໍລິການນາຍໜ້າ;

7. ເກັບຮັກສາສຳເນົາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້າສອງດ້ານ;

8. ປະຕິບັດພັນທະຕ່າງໆ ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

9. ລາຍງານການດຳເນີນທຸລະກິດທີ່ຕິດພັນກັບສິນຄ້າສອງດ້ານຂອງຕົນ ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຊາບ ສອງ ຄັ້ງ/ປີ ກຳນົດເວລາສົ່ງບົດລາຍງານຊ້າສຸດບໍ່ໃຫ້ກາຍວັນທີ ສິບຫ້າ ຂອງເດືອນກໍລະກົດ ແລະ ວັນທີ ສິບຫ້າ ຂອງເດືອນ ມັງກອນ ປີຖັດໄປ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດສິນຄ້າສອງດ້ານ**

ຫ້າມ ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ເຄື່ອນໄຫວ ດັ່ງນີ້:

1. ດຳເນີນທຸລະກິດທີ່ຕິດພັນກັບສິນຄ້າສອງດ້ານ ໂດຍບໍ່ໄດ້ຮັບອະນຸຍາດ;

2. ພະຍາຍາມ ຫຼື ໃຫ້ການສົມຮູ້ຮ່ວມຄິດ ໃນການກະກຽມ ຫຼື ກະທຳຄວາມຜິດໃດໜຶ່ງ ທີ່ຂັດກັບກຳລັດ ສະບັບນີ້;

3. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ບິດເບືອນ, ປອມແປງເອກະສານ ຫຼື ໃຫ້ການເທັດ ຕໍ່ເຈົ້າໜ້າທີ່;

4. ແກ້ໄຂ ໃບອະນຸຍາດ, ໃບຢັ້ງຢືນການບໍລິການນາຍໜ້າ ໂດຍບໍ່ໄດ້ຮັບອະນຸຍາດ;

5. ສ້າງອຸປະສັກກີດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້;

6. ໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງຜູ້ລະເມີດ;

7. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;

8. ມີການເຄື່ອນໄຫວອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 29 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີການເຄື່ອນໄຫວ ດັ່ງນີ້:

1. ສວຍໃຊ້ອໍານາດ, ຕໍາແໜ່ງ ຫຼື ໜ້າທີ່ ເພື່ອອໍານວຍຄວາມສະດວກໃຫ້ແກ່ການ ສົ່ງອອກ, ຜ່ານແດນ, ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້າສອງດ້ານ ທີ່ບໍ່ສອດຄ່ອງກັບດໍາລັດສະບັບນີ້;

2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຕໍ່ຜູ້ດໍາເນີນທຸລະກິດທີ່ຕິດພັນກັບສິນຄ້າສອງດ້ານ;

3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;

4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ຫຼື ບິດເບືອນຄວາມຈິງ;

5. ປົກປັງ, ປົກປ້ອງ ຫຼື ໃຫ້ຄວາມຮ່ວມມື ແກ່ຜູ້ກະທໍາຄວາມຜິດ;

6. ປອມແປງເອກະສານ ຫຼື ໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດໍາເນີນທຸລະກິດທີ່ກ່ຽວຂ້ອງ;

7. ຮຽກຮ້ອງເອົາຜົນປະໂຫຍດ;

8. ພະຍາຍາມ ຫຼື ສົມຮູ້ຮ່ວມຄິດ ໃນການກະກຽມ ຫຼື ກະທໍາຄວາມຜິດໃດໜຶ່ງ ທີ່ກໍານົດໄວ້ຂ້າງເທິງ;

9. ມີການເຄື່ອນໄຫວອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ

**ມາດຕາ 30 ອົງການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທະນາຄານ ແຫ່ງ ສປປ ລາວ, ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ**

ກະຊວງອຸດສາຫະກໍາ ແລະ ການຄ້າ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ ເປັນແຜນການ, ແຜນງານ ແລະ ໂຄງການ ເພື່ອຈັດຕັ້ງປະຕິບັດ;

3. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ;

4. ຄົ້ນຄວ້າສ້າງ, ປັບປຸງ ແລະ ປະກາດໃຊ້ ບັນຊີສິນຄ້າສອງດ້ານທີ່ຖືກຄຸ້ມຄອງ;

5. ຄົ້ນຄວ້າ ແລະ ພັດທະນາ ລະບົບການຄຸ້ມຄອງສິນຄ້າສອງດ້ານ;

6. ອອກ, ຍົກເລີກ ໃບອະນຸຍາດ, ໃບຢັ້ງຢືນການບໍລິການນາຍໜ້າ ແລະ ໃບຢັ້ງຢືນຜູ້ນໍາໃຊ້ສິນຄ້າສອງດ້ານສຸດທ້າຍ;

7. ເກັບບັນທຶກ ຄຳຮ້ອງຂໍທີ່ຖືກປະຕິເສດ, ໃບອະນຸຍາດ, ໃບຢັ້ງຢືນການບໍລິການນາຍໜ້າ ແລະ ໃບຢັ້ງຢືນຜູ້ນຳໃຊ້ສິນຄ້າສອງດ້ານສຸດທ້າຍ ທີ່ໄດ້ອອກໃຫ້;

8. ແຈ້ງ ແລະ ປະສານສົມທົບ ກັບຜູ້ຮ້ອງຂໍ ແລະ ເຈົ້າໜ້າທີ່ພາສີ ຕໍ່ກັບການພິຈາລະນາ ໃບອະນຸຍາດ ແລະ ໃບຢັ້ງຢືນການບໍລິການນາຍໜ້າ ທີ່ໄດ້ອອກໃຫ້ ຫຼື ຖືກປະຕິເສດ;

9. ຄຸ້ມຄອງ, ປັບປຸງ ພ້ອມທັງເຜີຍແຜ່ ລາຍຊື່ຂອງຜູ້ນຳໃຊ້ສິນຄ້າສອງດ້ານສຸດທ້າຍທີ່ຖືກຈຳກັດສິດ ແລະ ຖືກເກືອດຫ້າມ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

10. ແຕ່ງຕັ້ງ ແລະ ແຈ້ງລາຍຊື່ຂອງເຈົ້າໜ້າທີ່ ອອກອະນຸຍາດ, ຢັ້ງຢືນການດຳເນີນທຸລະກິດທີ່ຕິດພັນ ກັບສິນຄ້າສອງດ້ານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

11. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານສິນຄ້າສອງດ້ານ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າສອງດ້ານ ໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ກະຊວງການເງິນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ, ກວດກາການ ສົ່ງອອກ, ຜ່ານແດນ ສິນຄ້າສອງດ້ານ ທີ່ເກີດຂຶ້ນຢູ່ໃນອານາເຂດພາສີ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍພາສີ;

2. ປະສານສົມທົບ ກັບ ອົງການຄຸ້ມຄອງ ແລະ ກວດກາວຽກງານສິນຄ້າສອງດ້ານ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະເມີນ ແລະ ຄວບຄຸມຄວາມສ່ຽງ, ກວດສອບ ແລະ ຢັ້ງຢືນທຸລະກິດທີ່ຕິດພັນກັບສິນຄ້າສອງດ້ານ ຂອງ ດຳລັດສະບັບນີ້;

3. ຍຶດ, ອາຍັດສິນຄ້າ ແລະ ຮຽກຮ້ອງໃຫ້ ຜູ້ດຳເນີນທຸລະກິດທີ່ຕິດພັນກັບສິນຄ້າສອງດ້ານ ສະໜອງຂໍ້ມູນ ຫຼື ຫຼັກຖານ ເພີ່ມຕື່ມ ໃນກໍລະນີທີ່ມີຄວາມສົງໄສ ຫຼື ໄດ້ຮັບແຈ້ງຂໍ້ມູນທີ່ເຊື່ອໄດ້ວ່າສິນຄ້າດັ່ງກ່າວ ຈະຖືກນຳໄປໃຊ້ ຫຼື ອາດຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ;

4. ປະຕິບັດຕາມປຶດແນະນຳການຈັດຕັ້ງປະຕິບັດການຄຸ້ມຄອງສິນຄ້າຍຸດທະສາດ (Strategic Trade Control Enforcement Implementing Guideline) ທີ່ ອົງການພາສີໂລກ ກຳນົດອອກໃນແຕ່ລະໄລຍະ;

5. ລາຍງານ ແລະ ສະໜອງຂໍ້ມູນສະຖິຕິການ ສົ່ງອອກ, ຜ່ານແດນ ສິນຄ້າສອງດ້ານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນປົກກະຕິ;

6. ດຳເນີນ ແລະ ແກ້ໄຂຄະດີທາງພາສີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ລະບຸໄວ້ໃນກົດໝາຍພາສີ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ກະຊວງຕ່າງປະເທດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງລາຍຊື່ປະເທດທີ່ຖືກຂວ້ຳບາດຕາມມະຕິຂອງອົງການສະຫະປະຊາຊາດ;

2. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າສອງດ້ານ ຂອງ ສປປ ລາວ ໃຫ້ ອົງການສະຫະປະຊາຊາດ ຕາມພັນທະທີ່ກຳນົດໄວ້ໃນຍັດຕິສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ 1540 (2004);

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ກະຊວງປ້ອງກັນປະເທດກະຊວງຕ່າງປະເທດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ຕໍ່ກັບຄຸນລັກສະນະທາງດ້ານເຕັກນິກທາງດ້ານການທະຫານຂອງສິນຄ້າສອງດ້ານ ທີ່ສາມາດນຳໄປ ອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການພິຈາລະນາອອກໃບອະນຸຍາດ;

2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງຂໍ້ມູນຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ຖືກຈຳກັດສິດ ແລະ ຖືກເກືອດຫ້າມດຳເນີນທຸລະກິດ ກ່ຽວກັບສິນຄ້າສອງດ້ານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີ;

2. ດຳເນີນການສືບສວນສອບສວນ ແລະ ດຳເນີນຄະດີຕາມລະບຽບກົດໝາຍ ໃນກໍລະນີທີ່ເປັນການກະທຳຜິດທາງອາຍາ;

3. ປະສານສົມທົບກັບ ກະຊວງປ້ອງກັນປະເທດ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການພິຈາລະນາອອກໃບອະນຸຍາດ ສຳລັບສິນຄ້າສອງດ້ານ ປະເພດເຄມີ ແລະ ຊີວະ;

2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ກະຊວງສຶກສາທິການ ແລະ ກິລາ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການພິຈາລະນາອອກໃບອະນຸຍາດ ສຳລັບສິນຄ້າສອງດ້ານ ປະເພດລັງສີ ແລະ ນິວເຄຼຍ;

2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການພິຈາລະນາອອກໃບອະນຸຍາດ ສຳລັບສິນຄ້າສອງດ້ານ ປະເພດ ຊອບແວ, ໂປຣແກຣມ, ອຸປະກອນໄອຊີທີ ແລະ ການສື່ສານ;

2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງທະນາຄານ ແຫ່ງ ສປປ ລາວ**

ທະນາຄານ ແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະສານກັບ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະຫຼຸບສັງລວມຂໍ້ມູນຮອບດ້ານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າສອງດ້ານ ຂອງ ສປປ ລາວ, ລາຍງານໃຫ້ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງກັບວຽກງານຕ້ານການສະກັດກັ້ນ ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ (CPF) ເປັນແຕ່ລະໄລຍະ;

2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາວຽກງານຄຸ້ມຄອງສິນຄ້າສອງດ້ານ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 41 ເນື້ອໃນກວດກາ**

ການກວດກາວຽກງານຄຸ້ມຄອງສິນຄ້າສອງດ້ານ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້າສອງດ້ານ;

2. ການປະຕິບັດໜ້າທີ່ຂອງ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ກ່ຽວກັບວຽກງານຄຸ້ມຄອງສິນຄ້າສອງດ້ານ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານຄຸ້ມຄອງສິນຄ້າສອງດ້ານ.

**ມາດຕາ 42 ຮູບແບບກວດກາ**

ການກວດກາວຽກງານສິນຄ້າສອງດ້ານ ມີຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຣີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 43 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 44 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນມາດຕາ 28 ແລະ 29 ຂອງດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 45 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຈະຖືກ ກ່າວເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 46 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ, ແຕ່ບໍ່ຈິງໃຈລາຍງານ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 47 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ດຳເນີນການສົ່ງອອກ, ການຜ່ານແດນ ແລະ ການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້າສອງດ້ານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າທີ່ຖືກກວດພົບ ຫຼື ມູນຄ່າການບໍລິການ;

2. ມອບ ໃບອະນຸຍາດ ຫຼື ໃບຢັ້ງຢືນການບໍລິການນາຍໜ້າ ໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນນຳໃຊ້ ຈະຖືກຍົກເລີກໃບອະນຸຍາດ ຫຼື ໃບຢັ້ງຢືນການບໍລິການນາຍໜ້າ ແລະ ປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າທີ່ຖືກກວດພົບ ຫຼື ມູນຄ່າການບໍລິການ;

3. ປອມແປງ, ແກ້ໄຂຂໍ້ມູນ ໃບອະນຸຍາດ, ໃບຢັ້ງຢືນການບໍລິການນາຍໜ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າທີ່ຖືກກວດພົບ ຫຼື ມູນຄ່າການບໍລິການ.

**ມາດຕາ 48 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງ ລັດ, ລວມໝູ່, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 49 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳທາງອາຍາ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 50 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**